**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************************

ກະຊວງຖະຫແຼງຂ່າວ ແລະ ວັດທະນະທຳ ເລກທີ 95/ຖວ

ນະຄອນຫຼວງວຽງຈັນ,ວັນທີ 28/02/2005

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ວ່າດ້ວຍການອະນຸລັກມໍລະດົກແຫ່ງຊາດທາງດ້ານສິລະສະຖາປັດຕິຍາກຳລາວ, ໃນການບຸລະນະປະຕິສັງຂອນ, ການກໍ່ສ້າງວັດວາອາຮາມ, ບຸສະນີຍະຖານ, ສະຖານບູຮານ, ພະທາດ, ຫໍໂຮງ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍພິພິທະພັນທຸກປະເພດ, ຕຶກອາຄານເກົ່າ ແລະ ໃໝ່

- *ອີງຕາມ ລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ວ່າດ້ວຍການອະນຸລັກມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດແຫ່ງຊາດ ສະບັບເລກທີ 03/ປປທ,ລົງວັນທີ 20 ມິຖຸນາ 1997*
- *ອີງຕາມ ກົດມາຍວ່າດ້ວຍລັດຖະບານ ສປປ ລາວ ສະບັບປັບປຸງ*
- *ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຫຼງຂ່າວ ແລະ ວັດທະນະທຳ ສະບັບເລກທີ 25/ນຍ,ວັນທີ 21/03/1999*

## ລັດຖະມົນຕີກະຊວງຖະແຫຼງຂ່າວ ແລະ ວັດທະນະທຳອອກຂໍ້ຕົກລົງ ດັ່ງນີ້:

**ມາດຕາ 1. ຈຸດປະສົງ**

ເພື່ອເປັນການອະນຸລັກມໍລະດົກແຫ່ງຊາດທາງດ້ານສິລະປະ, ສະຖາປັດຕິມະກຳລາວ, ໃນການບຸລະນະປະຕິສັງຂອນ, ການກໍ່ສ້າງວັດວາອາຮາມ, ປູສະນີຍະຖານ, ສະຖານບູຮານ, ພະທາດ, ຫໍໂຮງ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍພິພິທະພັນທຸກປະເພດ, ຕຶກອາຄານເກົ່າ ແລະໃໝ່, ພະພຸດທະຮູບເກົ່າ ແລະ ໃໝ່ ທີ່ເປັນສີໄມ້ລາຍມືຂອງຄົນລາວ ໃຫ້ຄົງຢູ່ກັບຄົນລາວຕະຫຼອດເຊັ່ນລູກເຊັ່ນຫຼານ.

**ມາດຕາ 2. ຂອບເຂດໃນການນຳໃຊ້ຂໍ້ຕົກລົງສະບັບນີ້**

ນຳໃຊ້ຂອບເຂດທົ່ວປະເທດແຕ່ເໜືອຕະຫຼອດໃຕ້ ໂດຍສະເພາະໃນການປະຕິສັງຂອນວັດວາອາຮາມ, ປູສະນີຍະຖານ, ສະຖານບູຮານ, ພະທາດ, ຫໍໂຮງ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍພິພິທະພັນທຸກປະເພດ, ຕຶກອາຄານເກົ່າ ແລະ ພະພຸດທະຮູບເກົ່າ ທີ່ມີການສ້ອມແປງ ຫຼື ເຮັດໃໝ່ ຫຼື ລວມໄປເຖິງການກໍ່ສ້າງໃໝ່ ທີ່ນອນຢູ່ໃນເຂດສະຖານບູຮານເກົ່າ ຫຼື ຕຶກອາຄານເກົ່າ.

**ມາດຕາ 3. ປະເພດຂອງວັດຖຸບູຮານ, ສະຖານບູຮານ, ຕຶກອາຄານທີ່ຕ້ອງໄດ້ອະນຸລັກ**

ປະເພດວັດຖຸບູຮານບໍ່ວ່າຈະເປັນພະພຸດທະຮູບ, ເຄື່ອງເກົ່າ ບໍ່ວ່າຈະເປັນປະເພດເຄື່ອງໃຊ້ສອຍ ໃນເຮືອນ ເຊັ່ນ: ຂວັນທອງຂອງຄົນບູຮານ, ພາຫະນະຮັບໃຊ້ປະຈຳວັນ, ເຄື່ອງໃຊ້ສອຍທີ່ມີອາຍຸແຕ່ 50 ປີ ຂຶ້ນໄປ ແລະ ອື່ນໆ, ປະເພດເຄື່ອງໃຊ້ສອຍ ຢູ່ຕາມວັດວາອາຮາມ ບໍ່ວ່າຈະເປັນຂອງລະຄັງ, ບັນດາລວດລາຍທີ່ປະດັບຕາມຕົວສິງ ຫຼື ກຸດຕິຕ່າງໆ ເຊັ່ນ: ລາຍດອກດວງສີໜ້າ, ແຂນນາງ, ຍອຍຮວງຜຶ້ງ ແລະ ອື່ນໆ, ບັນດາເຄື່ອງແກະສະລັກທີ່ເຮັດດ້ວຍຫີນ, ໄມ້, ທອງ ແລະ ອື່ນໆ ທີ່ມີອາຍຸແຕ່ 50 ຂຶ້ນໄປ.

**ມາດຕາ 4. ການຄຸ້ມຄອງ, ການສຳຫຼວດ ແລະການກວດກາ ວັດຖຸບູຮານ**

ໃຫ້ພະແນກຖະແຫຼງຂ່າວ ແລະ ວັດທນະທຳແຂວງ ສົມທົບກັບຫ້ອງວ່າການຖະແຫຼງຂ່າວ ແລະ ວັດທນະທຳເມືອງ ຂຶ້ນທະບຽນສະຖານບູຮານ ແລະ ທິວທັດທຳມະຊາດ ໃນເຂດບ້ານເມືອງຂອງຕົນ ແລ້ວລາຍງານໃຫ້ກະຊວງ ເພື່ອຮັບຮອງເອົາເປັນມໍລະດົກລະດັບຊາດ ຫຼື ທ້ອງຖິ່ນ ຕາມການສະເໜີມາ ບໍ່ໃຫ້ກາຍເດືອນຕຸລາຂອງທຸກໆ ປີ.

**ມາດຕາ 5. ຮູບການໃນການສ້ອມແປງ, ບູລະນະ ແລະກໍ່ສ້າງໃໝ່**

ການອະນຸລັກມໍລະດົກແຫ່ງຊາດ ດ້ານສິລະປະ ແລະ ສະຖາປັດຕິຍະກຳລາວ ໃນການກໍ່ສ້າງ, ບູລະນະປະຕິສັງຂອນວັດວາອາຮາມ, ສະຖານບູຮານ, ບູສະນີຍະສະຖານພະທາດ, ຫໍໂຮງ, ຫໍມູນເຊື້ອ, ຫໍວາງສະແດງ, ຫໍພິພິທະພັນທຸກປະເພດ ແລະ ເຄຫາສະຖານເກົ່າ ແລະ ໃໝ່.

5.1 ກ່ຽວກັບທິດທາງ ແລະ ແນວທາງຂອງວຽກງານໃນການສ້ອມແປງ ທີ່ຕິດພັນກັບການສ້ອມແປງບັນດາວັດຖຸສິລະປະ, ສະຖາປັດຕິຍະກຳ ແລະ ອາຄານເກົ່າແກ່ທີ່ເປັນມໍລະດົກປທ່ງຊາດ ນັບແຕ່ 50 ປີ ຂຶ້ນໄປ, ບໍ່ວ່າຈະເປັນລະດັບທ້ອງຖິ່ນ, ລະດັບຊາດ ຫຼື ລະດັບໂລກກໍຕາມ ແບບວິທີການບຸລະນະສ້ອມແປງ ຈະຕ້ອງໄດ້ນຳໃຊ້ວັດສະດຸແບບເກົ່າດັ່ງເດີມ ໂດຍພະຍາຍາມປ່ຽນແປງພາກສ່ວນເດີມໜ້ອຍເທົ່າທີ່ຈະໜ້ອຍໄດ້;

5.2 ກ່ຽວກັບທິດທາງ ແລະ ແນວທາງຂອງວຽກງານໃນການກໍ່ສ້າງໃໝ່ບໍ່ວ່າຈະເປັນວັດວາອາຮາມ, ສາດສະນະສະຖານ, ອາຄານທີ່ໃກ້ກັບອາຄານເກົ່າ (ອາຄານທີ່ນອນຢູ່ໃນບັນຊີອະນຸລັກ) ລັກສະນະການກໍ່ສ້າງຕ້ອງໃຫ້ມັນກົມກືນ ແລະ ສອດຄ່ອງກັບບັນຍາກາດ ແລະ ທິວທັດສະພາບແວດລ້ອມຂອງຂົງເຂດນັ້ນໆ ໂດຍການນຳເອົາສະຖານປັດຕິຍະກຳ, ສິລະປະແບບພື້ນເມືອງຂອງລາວເປັນແບບ ແລະ ອາຄານກໍ່ສ້າງໃໝ່ນັ້ນ ບໍ່ໃຫ້ສູງເກີນອາຄານເກົ່າທີ່ມີຢູ່ແລ້ວ.

- ວຽກທີ່ກ່າວມາຂ້າງເທິງນັ້ນ ບໍ່ໄດ້ໝາຍຄວາມວ່າຈະສະກັດກັ້ນບໍ່ໃຫ້ມີການດຳເນີນວຽກໃດໆໄດ້ເລີຍ, ເພາະວ່າອີງໃສ່ຄວາມເປັນຈິງຕົວເມືອງ ຫຼື ວ່າຊີນນະບົດບໍ່ອາດຫຼີກລຽງໄດ້ໂດຍສະເພາະແມ່ນການພັດທະນາແຕ່ຈະຕ້ອງໄດ້ດຳເນີນຢູ່ໃນຂອບເຂດກົດລະບຽບທີ່ວາງໄວ້ແນ່ນອນ,

ສາມາດດຳເນີນໂຄງການຕ່າງຢູ່ໃນຕົວໃໝ່ ຫຼື ຊົນນະບົດໄດ້ໂດຍປະຕິບັດຕາມບັນດາຫຼັກການໃນເບື້ອງຕົ້ນ ຄືດັ່ງນີ້:

**ຫຼັກການໃນການສ້ອມແປງ ຈະຕ້ອງຢຶດຖືບັນດາຫຼັກການເບື້ອງຕົ້ນ ດັ່ງຕໍ່ໄປນີ້:**

**ຮັກສາຮູບແບບ ແລະ ລັກສະນະດັ່ງເດີມທາງດ້ານສະຖາປັດຕິຍະກຳ**

- ການນຳໃຊ້ວັດສະດຸຈະຕ້ອງແມ່ນຊະນິດດຽວກັນ ກັບທີ່ໃຊ້ໃນແບບເກົ່າຂອງສະໄຫມການກໍ່ສ້າງ ຂອງອາຄານເຊິ່ງພິຈາລະນາຕາມແຕ່ລະກໍລະນີ ຄື:

ຫຼັງຄາ: ໂຄງຫຼັງຄາຈະຕ້ອງເຮັດດ້ວຍໄມ້ຄືເກົ່າ, ປະເພດວັດສະດຸມຸງ ຈະຕ້ອງແມ່ນຊະນິດເກົ່າ (ດິນຂໍເຜົາຂະໜາດ ແລະຮູບຊົງເດີມ, ຟາກ ຫຼື ໄມ້ແປ້ນ)

ຝາ: ໄມ້, ໄມ້+ຕ້ອກຊີ, ໄມ້ໄຜ່, ດິນຈີ່ໂບກດ້ວຍປະທາຍປູນຂາວ

ພື້ນ:

- ຊັ້ນກອງລ່າງ ຫຼື ຕິດດິນ: ໄມ້ ຫຼື ເທປູນຊາຍ(ອາດປູກະໂລດິນເຜົາໄດ້)
- ຊັ້ນເທິງໄມ້

ປ່ອງອ້ຽມ ແລະປະຕູ: ເຮັດດ້ວຍໄມ້ຕາມແບບຮູບຊົງເດີມ

ແຜ່ດານ: ຕີໄມ້ດິ້ວພ້ອມໂບກປະທາຍປູນຂາວປະສົມກັບເຟືອງ, ໄມ້ໄຜ່, ໄມ້(ຢູ່ກອງຂີ່ຂອງພື້ນຊັ້ນເທິງ)

- **ຫຼັກການໃນການກໍ່ສ້າງໃໝ່ຈະຕ້ອງຢຶດຖືບັນດາຫຼັກການເບື້ອງຕົ້ນ ດັ່ງນີ້:**

  - ເພື່ອຮັກສາເອກະລັກ ແລະແບບຮູບດັ່ງເດີມທາງດ້ານສະຖາປັດຕິຍະກຳລາວຂອງຂົງເຂດນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໃຊ້ວັດສະດຸທ້ອງຖິ່ນແບບດັ່ງເດີມໃນການສ້ອມແປງ ແລະກໍ່ສ້າງວັດສະດຸບາງຊະນິດອາດຈຳເປັນ ອາດຈະຕ້ອງມີການນຳໃຊ້ດ້ວຍວິທີທັນສະໄໝຂຶ້ນ. ບັນດາວັດສະດຸທ້ອງຖິ່ນທີ່ນຳໃຊ້ກັນເປັນສ່ວນໃຫຍ່ມີຄືດັ່ງນີ້: ໄມ້, ໄມ້ໄຜ່, ກໍ່ດິນຈີ່ໂບກປະທາຍປູນຂາວ, ປະທາຍຕ້ອກຊີ ແລະ ກະແຕະໄມ້ໄຜ່, ປະທາຍປູນຂາວ, ດິນຂໍເຜົາ, ດິນກາໂລປູພື້ນ(ດິນເຜົາ).

- **ຮູບຊົງທາງດ້ານສະຖາປັດຕິຍະກຳລາວທີ່ແນະນຳໃຫ້ເອົາເປັນແບບ**

ບັນດາການກໍ່ສ້າງໃໝ່ໆ ທີ່ເກີດຂຶ້ນໃນເມືອງຈະຕ້ອງອອກແບບກໍ່ສ້າງໃຫ້ສອດຄ່ອງກັບທິວທັດຕົວເມືອງ ແລະພຶກສາຊາດທີ່ມີຢູ່, ໃນຄະນະດຽວກັນຮູບຊົງຂອງສະຖາປັດຕິຍະກຳລາວຈະຕ້ອງມີລັກສະນະເປັນຮູບ 4 ລ່ຽມຍາວ, ມີຫຼັງຄາໜ້າຈົ່ວເຄິ່ງຄືກັນໂດຍໃຫ້ມູນຄວາມຊັນຂອງຫຼັງຄາເທົ່າກັບ 45 ອົງສາ, ບັນດາປະຕູປ່ອງຢ້ຽມລວງຕັ້ງຕ້ອງຍາວກວ່າລວງນອນ ແລະອອກແບບດ້ວຍຮູບຊົງທີ່ງ່າຍດາຍ.

## ເອກະລັກສະເພາະຂອງຮູບຊົງ
## ການປຸກສ້າງແຕ່ລະພາກ ໃນ ສປປ ລາວ
### ພາກເໜືອ

- ການປຸກສ້າງຮູບຊົງອາຄານຕ່າງໆ ຈະມີລັກສະນະຕ່ຳ, ໂຄງຂອງຫຼັງຄາຈະຊ້ອນໆ ກັນແອນອອກເພິ່ນເອີ້ນວ່າຫຼັງຄາໂຕແມ່, ເສົາຈະເປັນເສົາກົມ, ມຸກດ້ານໜ້າ ແລະ ດ້ານຫຼັງຈະມີລັກສະນະແອນອ່ອນຄືປີກຍ່າງ, ຈະມີປ້ານລົມປ້ານຊາຍປະດັບດ້ວຍລວດລາຍ;
- ການປຸກສ້າງຮູບຊົງວັດວາອາຮາມຕ່າງໆ ຈະມີລັກສະນະຕ່ຳ ໂຄງຂອງຫຼັງຄາຈະຊ້ອນໆ ກັນແອນອ່ອນ ເພິ່ນເອີ້ນວ່າຫຼັງຄາໂຕແມ່, ເສົາຈະເປັນເສົາກົມ ຈະມີປ້ານລົມປ້ານຊາຍປະດັບດ້ວຍລວດລາຍ, ໂງ່ນາກແບບທຳມະດາ ແລະ ໂງ່ນາກແບບປະທານພອນ, ຈະມີດອກວັນແລນແບບລາຍທາງພາກເໜືອ ຄື: ລາຍຜັກກູດປະດັບປະດາຕາມຄຸ່ຍສັນຫຼັງຄາ, ຄຸ່ຍຕາມປ້ານລົມເປັນສ່ວນໃຫຍ່.
- ສ່ວນວຽກງານປະດັບປະດາບໍ່ວ່າຈະເປັນງານປະຕິມະກຳ ຫຼື ຈິດຕະກຳແທ້ແລ້ວແມ່ນລະອຽດປານີດ ຖ້າຈະລະອຽດແທ້ແມ່ນໃຫ້ເບິ່ງຕາມປຶ້ມສິລະປະລາຍລາວຂອງຫຼວງພະບາງໂດຍແມ່ນພໍ່ເຖົ້າເພັຍຕັນເປັນຜູ້ແຕ້ມ ແລະ ຂີດຊຽນອອກມາ ຫຼື ປຶ້ມລາຍຂອງທ່ານປຣິດດາ ເປັນຜູ້ລວບລວມສິລະປະຂອງຫຼວງພະບາງຊຶ່ງເປັນສິລະປະທາງພາກເໜືອໂດຍແທ້.

### ພາກກາງ

- ຮູບຊົງການປຸກສ້າງອາຄານຫຼັງຄາ ຈະມີລັກສະນະສູງສອງຊັ້ນຊ້ອນກັນແຕ່ມີລັກສະນະແຂງກະດ້າງເພິ່ນເອີ້ນວ່າໂຄງສ້າງຫຼັງຄາຕົວຜູ້ ມຸກຫຼັງຄາທັງສອງດ້ານຈະເປັນຮູບສາມຫຼ່ຽມຍົກຊົງສູງເດັ່ນ, ເສົາຈະເປັນຮູບຫຼ່ຽມເຊັ່ນແປດຫຼ່ຽມ, ຫົກຫຼ່ຽມຕາມລຳດັບ ແລະ ສ້ອຍທາງຫົວ, ສ່ວນປ້ານລົມປ້ານຊ້າຍຈະມີລັກສະນະແຂງກະດ້າງ, ສ່ວນໃຫຍ່ຈະປະດັບຍອດຊໍ່ຟ້າເປັນຊັ້ນໆ ຂຶ້ນ ແລະ ເສດຕະສັດຈະຫຼຸດລັ່ນກັນລົງມາຕາມລຳດັບບາງບ່ອນກໍເລີ້ມແຕ 3 ຍອດຂຶ້ນໄປໂດຍບໍ່ຈຳກັດແລ້ວແຕ່ສັດທາແຕ່ເພິ່ນຈະຖືເອົາຈຳນວນຄີກເປັນຫຼັກແລ້ວແຕ່ຄວາມສາມາດຂອງອາຄານຈະຮັບຮອງໄດ້.
- ສ່ວນສີໜ້າປະດັບດ້ວຍຮວງເຜິ້ງ, ຕາມຫົວເສົາຈະມີແຂນນາງຮູບນາກປະດັບເປັນຫຼັກ, ລວດລາຍປານປະຕູ ຫຼື ປ່ອງຢ້ຽມຈະແກະສະຫຼັກປະກອບເປັນເລື່ອງເປັນລາວຄັກແນ່ເຊັ່ນໃນບົດວັນນະຄະດີຕ່າງໆ ບໍ່ວ່າເລື່ອງພຸດທະປະຫວັດ, ເລື່ອງພະເວດສັນດອນ ແລະ ອື່ນໆ.
- ງານປະຕິມະກຳ ແລະ ຈິດຕະກຳສ່ວນຫຼາຍແມ່ນປະດັບລວດລາຍກັນດົກສາມໂຕ ແລະ ແປວໄຟສ່ວນຫຼາຍແມ່ນຈະໃຊ້ເອກະລັກຂອງດອກລາຍປະດັບໂດຍສະເພາະດອກໃຜດອກມັນເປັນຕົ້ນ ສ່ວນ

ລາຍລະອຽດໃຫ້ເບິ່ງຂໍ້ມູນຈາກປື້ມສິລະປະລາຍລາວແຕ້ມລຽບລຽງໂດຍ ພໍ່ເຖົ້າ **ທິດພູ** ແລະ ອາຈານ **ບຸນເລີງ ເວນວິລາວົງ** ຊຶ່ງເປັນຜູ້ລິເລີ້ມພິມປື້ມລາຍລາວອອກນຳໃຊ້ກັນໃນປະຈຸບັນ.

**<u>ພາກໃຕ້</u>**

ການກໍ່ສ້າງອາຄານຮູບຊົງຈະຕ່ຳຫຼັງຄາສ່ວນໃຫຍ່ຈະເປັນຫຼັງຄາຊັ້ນດຽວມຸກຫຼັງຄາແປຊ້ອນກັນອອກເສົາຈະເປັນເສົາຫຼ່ຽມເປັນລັກສະນະແຂງກະດ້າງ.

- ງານປະຕິມະກຳ ແລະ ຈິດຕະກຳຈະປະດັບແບບດອກດວງໃຫຍ່ໆ ເປັນຫຼັກດອກລາຍຂອງໃຜມັນສະກຸນຊ່າງສ່ວນໃຫຍ່ຈະເປັນສະກຸນຊ່າງແບບພື້ນບ້ານບາງງານ ກໍມີຄວາມປານີດ ແລະ ລະອຽດຖ້າເປັນຊ່າງຫຼວງລາຍລະອຍດທ່ານສາມາດເບິ່ງຕາມປື້ມສີລະປະລາຍລາວພາກໃຕ້ລວບລວມໂດຍ ອາຈານ **ປຣິດາ**.

**ມາດຕາ 6. ອົງການທີ່ຮັບຜິດຊອບ ແລະຄຸ້ມຄອງ**

ຫ້ອງການແນວລາວສ້າງຊາດເມືອງ, ຫ້ອງການ ຄຂປກ ເມືອງ, ພະແນກຖະແຫຼງຂ່າວແຂວງ, ນະຄອນຫຼວງ ແລະ ເຂດພິເສດ, ສູນກາງແນວລາວສ້າງຊາດ, ສຳນັກງານນາຍົກລັດຖະມົນຕີ ຕາມລຳດັບ.

**ມາດຕາ 7. ຂໍ້ຫ້າມ**

7.1 ຫ້າມອະນຸຍາດໃຫ້ມ້າງບັນດາສິ່ງປຸກສ້າງທີ່ເປັນສາດສະໜາສະຖານ ຫຼື ບັນດາເຄຫະສະຖານທີ່ນອນຢູ່ໃນບັນຊີອະນຸລັກ, ການມ້າງ ແລະ ການດັດແປງຂະໜາດໃຫຍ່ແມ່ນບໍ່ອະນຸຍາດ, ການບູລະນະສ້ອມແປງແມ່ນອະນຸຍາດແຕ່ຕ້ອງສະເໜີແບບແຜນລະອຽດໃນການກໍ່ສ້າງກ່ຽວກັບເຕັກນິກເພື່ອປຶກສາຫາລືຕໍ່ວິຊາການທີ່ກ່ຽວຂ້ອງຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເສຍກ່ອນ;

7.2 ຫ້າມປຸກສ້າງ, ສ້ອມແປງບູລະນະພະພຸດທະຮູບ, ເທວະຮູບ, ເທວະໄລ, ກຸດຕິວິຫານ, ສາລາໂຮງທຳຫໍກອງ, ທາດເຈດີ, ສະຖານບູຮານ, ຮ່ອງຮອຍປະຫວັດສາດ, ສະຖາປັດຕິຍະກຳ ແລະ ອື່ນໆ ທີ່ພົວພັນເຖິງພຸດທະສາສະນາກ່ອນໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງພາກສ່ວນໃດ, ບຸກຄົນໃດ ຫາກມີການກໍ່ສ້າງກ່ອນແຈ້ງການສະບັບນີ້, ແຕ່ຍັງບໍ່ທັນແລ້ວໃຫ້ຍຸດຕິ ຫຼື ໂຈະການກໍ່ສ້າງຊົ່ວຄາວກ່ອນແລ້ວເຮັດໜັງສືຂໍອະນຸມັດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ;

7.3 ຫ້າມຕັດທາງລົດບັນທຸກໄປ-ມາຜ່ານເຂດອະນຸລັກສະຖານບູຮານ ແລະ ທິວທັດທຳມະຊາດຍົກເວັ້ນແຕ່ລັດເຫັນສົມຄວນເຮັດທາງໄວ້ເພື່ອສະດວກໃນການທ່ຽວຊົມ ແລະ ຈະບໍ່ເຮັດໃຫ້ຄຸນຄ່າສະຖານບູຮານ ແລະ ທິວທັດທຳມະຊາດເສຍຫາຍ;

7.4 ຫ້າມປຸກສ້າງຕຶກອາຄານໃກ້ເຂດອະນຸລັກສະຖານບູຮານ ແລະ ທິວທັດທຳມະຊາດຢ່າງໜ້ອຍ 100 ແມັດ;

7.5 ຫ້າມນຳລົດບັນທຸກໆ ຊະນິດເຂົ້າ-ອອກ ໃນເຂດສະຖານບູຮານ ແລະທິວທັດທຳມະຊາດຍົກເວັ້ນແຕ່ລົດທີ່ລັດເຫັນວ່າຈຳເປັນ ແລະ ຈະບໍ່ເຮັດໃຫ້ຄຸນຄ່າສະຖານບູຮານ ແລະທິວທັດທຳມະຊາດເສຍຫາຍ;

7.6 ຫ້າມຕັດຕົ້ນໄມ້ ແລະ ທຳລາຍສະພາບແວດລ້ອມທີ່ມີຢູ່ໃນຂົງເຂດອະນຸລັກສະຖານບູຮານ ແລະ ທິວທັດທຳມະຊາດ;

7.7 ຫ້າມສ້າງພະພຸດທະຮູບໃສ່ກາງແຈ້ງໂດຍທີ່ບໍ່ມີເຄື່ອງກັ້ງບັງແດດ;

7.8 ຫ້າມສ້າງພະພຸດທະຮູບສູງເກີນ 5 ແມັດ ຂຶ້ນໄປ.

**ມາດຕາ 8. ການຈັດຕັ້ງປະຕິບັດ**

8.1 ຖ້າອົງການຈັດຕັ້ງໃດ, ພາກສ່ວນ ຫຼື ບຸກຄົນໃດມີຈຸດປະສົງຈະກໍ່ສ້າງ, ບູລະນະສ້ອມແປງ ຄືນໃໝ່ສິ່ງໄດ້ກ່າວໄວ້ຂ້າງເທິງນັ້ນ, ຈະຢູ່ໃນກໍລະນີ ແລະລັກສະນະຂອງໂຄງການກໍ່ສ້າງ ຫຼື ສ້ອມແປງຂະໜາດນ້ອຍ ແລະ ໃຫຍ່ກໍຕາມ ຕ້ອງໄດ້ມາວພັນຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເມືອງ, ຫ້ອງການແນວລາວສ້າງຊາດເມືອງ, ຫ້ອງການ ຄຂປກ ເມືອງ, ພະແນກຖະແຫຼງຂ່າວແຂວງ, ນະຄອນຫຼວງ ແລະ ເຂດພິເສດ, ສູນກາງແນວລາວສ້າງຊາດ, ສຳນັກງານນາຍົກລັດຖະມົນຕີ ຕາມລຳດັບ.

**8.2 ເອກະສານປະກອບ ມີ:**

- ໃບສະເໜີຂໍອະນຸຍາດບູລະນະສ້ອມແປງ ຫຼື ກໍ່ສ້າງ;
- ຮູບແບບ, ແຜນຜັງ ແລະລາຍລະອຽດຕ່າງໆ ຂອງສະຖານທີ່ຈະບູລະນະສ້ອມແປງ ຫຼືກໍ່ສ້າງຄົບຊຸດ;
- ບົດລາຍງານປະຫວັດຄວາມເປັນມາຂອງສະຖານທີ່ຈະບູລະນະສ້ອມແປງ ຫຼື ກໍ່ສ້າງ.

**ມາດຕາ 9. ມາດຕະການ**

- ຕໍ່ພາກສ່ວນອົງການຈັດຕັ້ງ ຫຼື ບຸກຄົນໃດທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ແມ່ນຈະຖືກສຶກສາອົບຮົມຕັກເຕືອນປັບໄໝແລ້ວແຕ່ກໍລະນີໜັກ ຫຼື ເບົານອກຈາກນັ້ນອາດຈະຖືກໂທດເພີ້ມເປັນຕົ້ນສັ່ງໂຈະໂຄງການບູລະນະສ້ອມແປງ ຫຼື ກໍ່ສ້າງໄວ້ກ່ອນ;
- ຖ້າຍັງມີການຝ່າຝືນຈະຕ້ອງຖືກປັບໄໝ ແລະ ຖືກດຳເນີນຄະດີຕາມລະບຽບກົດໝາຍບ້ານເມືອງ.

**ມາດຕາ 10.** ໃຫ້ທຸກໆ ພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ, ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

**ດຣ ພັນດວງຈິດ ວົງສາ**

( ໄດ້ເຊັນ ແລະ ຈ້ຳກາແລ້ວ )